ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ŒŒŒ===000===ŒŒŒ

ກະຊວງກະສິກຳ ແລະ ປ່າໄມ້

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

ຫ້ອງການປະສານງານໂຄງການພັດທະນາອ່າງຮັບນ້ຳງ˜ມ







# ຂໍ້ແນະນຳບາງເຕັກນິກກ່ຽວກັບ ການເຮັດນາຢອດແບບບໍ່ໄດ້ກຽມດິນ

## ປົດນຳ

ການຜະລິດເຂົ້າກໍ່ແມ່ນບັນຫານຶ່ງທີ່ສຳຄັນເພື່ອຮອງຮັບໃຫ້ແກ່ການບໍລິໂພກໃນສັງຄົມ, ໃນໄລຍະຜ່ານມາການຜະລິດເຂົ້າໂດຍທົ່ວໄປແລ້ວ ແມ່ນມີຕົ້ນທຶນສູງສະມັດຕະພາບຜົນຜະລິດເຂົ້າຕົກຕ່ຳ,ໄຊ້ແຮງງານແລະເວລາຫຼາຍພໍສົມຄວນເພື່ອເປັນການປັບປຸງແກ້ໄຂເຮັດໃຫ້ການຜະລິດເຂົ້າມີປະສິດທິຜົນດີຂື້ນກ່ວາເກົ່າຈຶ່ງໄດ້ນຳເອົາເຕັກນິກການເຮັດນາຢອດແບບບໍ່ໄດ້ກຽມດິນເປັນເຕັກນິກໃໝ່ແລະມີການຫລຸດຜ່ອນຕົ້ນໃນການຜະລິດເຂົ້າເຊັ່ນ : ປະຢັດແຮງງານ , ເວລາ,ຕົ້ນທຶນແລະມີສະມັດຕະພາບດີ ນອກນັ້ນຍັງເປັນທາງອອກອີກວິທີ 1 ສຳລັບຊາວນາລາວໃນທົ່ວປະເທດ. ການເຮັດນາຢອດແບບບໍ່ໄດ້ກຽມດິນແມ່ນເລີ່ມມີການນຳເຕັກນິກນີ້ມາທົດລອງ ແລະ ສາທິດໃນເຂດທົ່ງພຽງແຕ່ປີ 2006 ເປັນຕົ້ນມາ ແລະ ໄດ້ມີການປັບປຸງ ແລະພັດທະນາເຕັກນິກດັ່ງກ່າວຈົນມາຮອດປະຈຸບັນນີ້ພວກເຮົາສາມາດຂຽນເປັນຂໍ້ແນະນຳໄດ້ແຕ່ກໍ່ບໍ່ແມ່ນສົມບູນແບບພຽງແຕ່ເປັນການແນະນຳບາງຈຸດສຳລັບຊາວນາຜູ້ທີ່ຕ້ອງການປູກເຂົ້າແບບບໍ່ໄດ້ຕຽມດິນແລະໄຊ້ຕົ້ນທຶນເຂົ້າໃນການຜະລິດຕ່ຳກ່ວາແບບນາດຳຕາມຂັ້ນຕອນດັ່ງລຸ່ມນີ້ :

## I. ການຕຽມພື້ນທີ່:

ໃນການກະກຽມເນື້ອທີ່ນາຕ້ອງເປັນນາທີ່ສາມາດລະບາຍນ້ຳອອກໄດ້ດີ, ບໍ່ມີນ້ຳຂັງ ເປັນນາໄຮ່ໃຫຍ່ ແລະ ເອົານ້ຳເຂົ້າງ່າຍພື້ນທີ່ນາຕ້ອງແຫ້ງບໍ່ມີນ້ຳໃນເວລາກ່ອນຈະມີການຢອດເມັດເຂົ້າຖ້າພື້ນທີ່ນາມີຕໍ່ເຟືອງຫຼາຍຕ້ອງໄດ້ກຳຈັດຕໍເຟືອງດ້ວຍວິທີການຕັດຕໍເຟືອງ. ແຕ່ຖ້າພື້ນທີ່ນາດັ່ງກ່າວມີຫຍ້າຫຼາຍກໍ່ຄວນນຳໃຊ້ຮໍອກໂມນໃນການຄວບຄຸ້ມຫຍ້າກ່ອນໂດຍໃຊ້ຮໍອກໂມນປະເພດ ໄກຼໂຟຣເຊດ (Gryphosate) ໃນອັດຕາ 3 — 4ລິດ ແລະ 2,4 D ໃນອັດຕາ 1—1,5 ລິດປະສົມກັບນ້ຳປະມານ 200ລິດແລ້ວສີດພົ່ນໃຫ້ທົ່ວ 0,5 ເຮັກຕາ.

## II. ການກະຕຽມເມັດພັນເຂົ້າ

ໃນການກະຕຽມເມັດພັນເຂົ້າພວກເຮົາຄວນມີການຄັດເມັດພັນເຂົ້າເພື່ອບໍ່ໃຫ້ມີສິ່ງເຈືອປົນນອກນັ້ນກໍ່ຕ້ອງໄດ້ທົດສອບຄວາມງອກຂອງເມັດພັນເຂົ້າເສຍກ່ອນຕ້ອງມີຄວາມງອກບໍ່ຕ່ຳກ່ວາ 90% ເພາະວ່າຖ້າຄວາມງອກບໍ່ໄດ້ມາດຖານຈະເຮັດໃຫ້ເຂົ້າທີ່ຢອດແລ້ວເກີດບໍ່ສະມ່ຳສະເໝີຕາມການປັບຄວາມຖີ່ຫ່າງຂອງການຢອດເມັດ

## III. ການຢອດເມັດ.

ກ່ອນຈະມີການຢອດເມັດເຂົ້າຕ້ອງໄດ້ສັງເກດເບິ່ງພື້ນທີ່ກ່ອນຖ້າເປັນພື້ນທີ່ຈູດຕໍເຟືອງແມ່ນສາມາດຢອດເມັດເຂົ້າໄດ້ເລີຍຫຼັງຈາກຈູດຕໍແລ້ວ.ແຕ່ຖ້າເປັນພື້ນທີ່ມີການໃຊ້ຮໍອກໂມນຄວບຄຸ້ມຫຍ້າຄວນຢອດເມັດເຂົ້າຫຼັງສີດພົ່ນຮໍອກໂມນຄວບຄຸ້ມຫຍ້າໄດ້ປະມານ 1 — 2 ອາທິດຖ້າວ່າພວກເຮົາຢອດເມັດເລີຍຫຼັງຈາກສີດພົ່ນຮໍອກໂມນຈະມີຜົນຕໍ່ການແຕກງອກຂອງເມັດພັນເຂົ້າ. ການຢອດເມັດເຂົ້າຄວນໃຊ້ເມັດພັນເຂົ້າໃນອັດຕາ 70 — 80 ກິໂລ / ha ນອກນ˜ນຍັງໃຊ້ຝຸ່ນຮອງພື້ນຢອດລົງພ້ອມກັບເມັດພັນເຂົ້າໃສ່ຝຸ່ນເຄມີສູດ 16—20—0 16—8—8 ຫຼື 15—15—15 ໃນອັດຕາ 100ກິໂລ/ha .

## IV. ການບົວລະບັດຮັກສາ.

ການບົວລະບັດຮັກສາເຂົ້ານາຢອດນີ້ກໍ່ແມ່ນຄ້າຍຄືກັບນາດຳພຽງແຕ່ພວກເຮົາຕ້ອງໄດ້ເອົາໃຈໃສ່ໃນເວລາເຂົ້ານ້ອຍເຊັ່ນ: ຫຼັງຈາກຢອດເມັດເຂົ້າແລ້ວຕ້ອງໄດ້ເອົານ້ຳເຂົ້າໃຫ້ທົ່ວປະແຊ່ຂັງໄວ້ໃນໄຮ່ນາປະມານ 24 —48 ຊົ່ວໂມງແລ້ວເປັ່ງນ້ຳອອກໃຫ້ແຫ້ງໝົດເພາະຈະເຮັດໃຫ້ດິນມີຄວາມຊຸ່ມໃນການແຕກງອກຂອງເມັດເຂົ້າ. ຫຼັງຈາກເຂົ້າແຕກງອກແລ້ວມີຄວາມຍາວປະມານ 10—15 cm

ແລ້ວຈຶ່ງເອົານ້ຳເຂົ້າແຊ່ຂັງໄວ້ເລີຍແຕ່ບໍ່ໃຫ້ຖ້ວມປາຍເຂົ້າ ພ້ອມກັນນັ້ນກໍ່ສັງເກດການລະບາດຂອງຫອຍກິນເຂົ້າຖ້າ ເຫັນການລະບາດຂອງຫອຍກໍ່ໃຫ້ກຳຈັດເພາະຕົ້ນເຂົ້າໃນ ໄລຍະນີ້ມີຄວາມຊ່ຽງຕໍ່ການທຳລາຍຂອງຫອຍ. ໃນເມື່ອເຂົ້າ ມີອາຍຸ 1—2 ເດືອນ ຈຶ່ງໃສ່ຝຸ່ນອີກຄັ້ງໃນອັດຕາຝຸ່ນ 16—20—0 = 50 ກິໂລ/ haແລະ ປະສົມກັບ 46—0—0ອັດຕາ 50ກິໂລ/ha ຫວ່ານໃຫ້ທົ່ວພາຍໃນ 1 ha ຫຼັງຈາກນັ້ນກໍ່ແມ່ນມີວິທີການບົວລະບັດຮັກສາຄາຍຄືກັບ ນາດຳ.

## V. ການເກັບກ່ຽວ.

ສ່ວນເກັບກ່ຽວນີ້ແມ່ນປະຕິບັດຄືກັບນາດຳ ແລະ ນາຫວ່ານແຕ່ຖ້າໃຫ້ດີທີ່ສຸດຄວນໃຊ້ເຄື່ອງຈັກກ່ຽວເພາະຈະ ເຮັດໃຫ້ເຟືອງຈະຈາຍທົ່ວໄຮ່ນາເພື່ອນຳໃຊ້ເຟືອງດັ່ງກ່າວ ເປັນພືດປົກຄຸ້ມຫຍ້າໃນລະດູການຕໍ່ໄປ.

## VI. ການສົມທຽບຕົ້ນທຶນການຜະລິດແບບນາຍອດ ແລະ ນາດຳ.

ໃນການສົມທຽບການຄິດໄລ່ຕົ້ນທຶນການຜະລິດເຂົ້າ ແບບເຕັກນິກການຢອດເມັດແລະເຕັກນິກການປັກດຳດ້ວຍ ແຮງງານຄົນແມ່ນໄດ້ຄິດໄລ່ໃນຕາຕະລາງຕົວຢ່າງລຸ່ມນີ້ :

### 1. ການຄິດໄລ່ຕົ້ນທຶນຂອງນາຢອດໃນ 1 ha.

| ລ/ດ | ລາຍການ | ຈຳນວນ | ລາຄ່າ ( ກີບ ) | ມູນຄ່າ ( ກີບ ) |
|---|---|---|---|---|
| 1 | ແນວພັນເຂົ້າ | 80 Kg | 5.000 | 400.000 |
| 2 | ຮ່ອກໂມມ ຄວບຄຸ້ມຫຍ້າ | 5 ລິດ | 60.000 | 300.000 |
| 3 | ຄ່າສີດພົນ ຮ່ອກໂມມ | 1 ha | 300.000 | 300.000 |
| 4 | ຄ່າຢອດເມັດ | 1 ha | 500.000 | 500.000 |
| 5 | ຝຸ່ນເຄມີ | 6 ເປົາ | 350.000 | 2.100.000 |
| 6 | ຄ່າແຮງງານ ບົວລະບັດຮັກສາ | 1 ha | 500.000 | 500.000 |
| 7 | ຄ່າແຮງງານເກັບກູ້ | 1 ha | 1.500.000 | 1.500.000 |
| 8 | ຄ່າຟາດແລະ ຂົນສົ່ງ | 1 ha | 300.000 | 300.000 |
| 9 | ຢາປາບສັດຕູພືດ | 1 ha | 250.000 | 250.000 |
| | ລວມ: | | | 5.900.000 |



### 2. ການຄິດໄລ່ຕົ້ນທຶນຂອງນາດຳໃນ 1ha.

| ລ/ດ | ລາຍການ | ຈຳ ນວນ | ລາຄ່າ ( ກີບ ) | ມູນຄ່າ ( ກີບ ) |
|---|---|---|---|---|
| 1 | ແນວພັນເຂົ້າ | 90 Kg | 5.000 | 450.000 |
| 2 | ກຽມດິນ | 1 ha | 1.500.000 | 1.500.000 |
| 3 | ແຮງງານຕົກກ້າ ບົວລະບັດຮັກສາ | 800 $m^2$ | 300 | 240.000 |
| 4 | ແຮງງານປັກດຳ | 1 ha | 1.500.000 | 1.500.000 |
| 5 | ຝຸ່ນເຄມີ | 6 ເປົາ | 350.000 | 2.100.000 |
| 6 | ແຮງງານ ບົວລະບັດຮັກສາ | 1 ha | 500.000 | 500.000 |
| 7 | ແຮງງານເກັບກູ້ | 1 ha | 1.500.000 | 1.500.000 |
| 8 | ຄ່າຟາດແລະ ຂົນສົ່ງ | 1 ha | 300.000 | 300.000 |
| 9 | ອຸປະກອນອື່ນໆ (ໄມ້ມັດກ້າ) | 1 ha | 150.000 | 150.000 |
| 10 | ຢາປາບສັດຕູພືດ | 1 ha | 250.000 | 250.000 |
| | ລວມ | | | 8.490.000 |

